LAO ASEAN LEASING PUBLIC COMPANY

ບົດບັນທຶກ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

ວັນ, ເວລາ ແລະ ສະຖານທີ່

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 02 ມີຖຸນາ 2023 ເວລາ 11:00 ຕອນເຊົ້າ (ເລີ່ມລົງທະບຽນ ເວລາ 10:30 ຕອນເຊົ້າ), ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອມະຫາຊົນ ຊັ້ນ 1, ຕຶກ NNN, ຖະໜົນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ.

ເລີ້ມເປີດກອງປະຊຸມ

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ກຳນົດວັນທີ 18 ພຶດສະພາ 2023 ເປັນວັນປິດປຶ້ມເພື່ອ ກຳນົດຜູ້ຖືຮຸ້ນນຂອງບໍລິສັດ ທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ 02 ມີຖຸນາ 2023, ມີທຶນຈົດທະບຽນທີ່ຖອກແລ້ວ 30,150,000,000ກີບ, ເຊິ່ງເປັນຕົວແທນໃຫ້ແກ່ 301,500,000 ຮຸ້ນທີ່ອອກໃຫ້. ໃນຕອນເລີ່ມຕົ້ນຂອງກອງປະຊຸມ, ປະກອບມີຜູ້ຖືຫຸ້ນ 6 ຄົນ ເຂົ້າຮ່ວມໂດຍ ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມແທນ, ເຊິ່ງລວມເປັນ 297,880,600 ຮຸ້ນ ຫຼື 98,80%, ເຊິ່ງຫຼາຍກວ່າເຄິ່ງໜຶ່ງ ຂອງຮຸ້ນທັງໝົດ ທີ່ອອກໃຫ້.

ທ່ານ ອານັນ ເພັດສຸລິນ ຜູ້ທີ່ໄດ້ຮັບມອບໝາຍ ຈາກທ່ານນາງ Yuki Scott, ປະທານສະມາຊິກສະພາບໍລິຫານ ໃຫ້ເປັນປະທານກອງປະຊຸມ ແລະ ປະກາດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ທີ່ຈັດຂຶ້ນ ໂດຍການຕ້ອນຮັບທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນນປະຈຳປີ 2022:

ພິທີກອນ ເປັນຜູ້ແນະນຳ ຜູ້ອຳນວຍການຂອງບໍລິສັດ, ຜູ້ອຳນວຍການຝ່າຍບໍລິຫານ ແລະ ພະນັກງານ ທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

LAO ASEAN LEASING PUBLIC COMPANY

ສະມາຊິກສະພາບໍລິຫານ

ຊື	ຕຳແໜ່ງ	ມອບສິດໃຫ້
ທ່ານນາງ. Yuki Scott	ປະທານ	ທ່ານ ອານັນ ເພັດສຸລິນ
ທ່ານ. Mitsuteru Nagaya	ຮອງປະທານ	ທ່ານນາງ ຕາວັນ ວົງຫາຈັກ
ທ່ານ. Yoshihito Oshima	ສະມາຊິກ	ທ່ານນາງ ລູ້ລີ ລີເລ່ຍນູ
ທ່ານ. Hirofumi Inada	ສະມາຊິກ	ທ່ານນາງ ເຟື້ອງຟ້າ ບົວວົງ
ທ່ານນາງ. Harumi Ide	ສະມາຊິກ	ທ່ານນາງ ປາລະມີ ພົມມະສອນ

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ທ່ານນາງ. ອັນນະພອນ ສຸນັນທາ	ຜູ້ຕ່າງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານ ວົງແກ້ວ ຂະທຸມພົນ	ຜູ້ຕ່າງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານ ອັດສະວິນ ຂັນທະວົງ	ຜູ້ຕ່າງໜ້າຈາກ ຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານນາງ. ເກສອນ ເທບພາສຸວັນ	ຜູ້ຖືຮຸ້ນລາຍຍ່ອຍຂອງ ລອຊ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ

ພິທີກອນ	ທ່ານນາງ ອຳເພັ່ງ ສຸກາທະວີ
ພະນັກງານຕ້ອນຮັບ ແລະ ລົງທະບຽນ	ທ່ານນາງ ປານ ແສງດາລາ
ພະນັກງານລົງຄະແນນສຽງ	ທ່ານ ໄຊພອນ ໄຊຍະວົງ

ຫລັງຈາກນັ້ນ, ພິທີກອນ ໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມແລະລາຍງານແຕ່ລະວາລະຂອງກອງປະຊຸມດັ່ງຕໍ່ໄປນີ້:

1. ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນນໜຶ່ງທ່ານ ມີຄະແນນສຽງເຊິ່ງເທົ່າກັບຈຳນວນຮຸ້ນທັງໝົດ ຂອງທ່ານ; ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງແຕ່ວາລະ, ຈະໄດ້ສອບຖາມຖ້າວ່າມີຜູ້ຖືຫຸ້ນຜູ້ທີ່ບໍ່ເຫັນດີ ຫຼືບໍ່ຮອງຮອງໃນວາລະນັ້ນ. ໃນກໍລະນີທີ່ ບໍ່ເຫັນດີຫລືບໍ່ຮັບຮອງ ແມ່ນໃຫ້ ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ເຊິ່ງໄດ້ແຈກຢາຍໂດຍເຈົ້າໜ້າທີ່ກ່ອນການປະຊຸມ ພ້ອມທັງຕ້ອງໄດ້ຍົກບັດຂຶ້ນມາຈົນກວ່າເຈົ້າໜ້າທີ່ຈະເກັບກຳຂໍ້ມູນ ເພື່ອໄປກວດນັບຄະແນນສຽງໃນວາລະນັ້ນ ແລະ ສຳລັບຜູ້ຖືຫຸ້ນທີ່ບໍ່ຍົກບັດຂຶ້ນມາ, ຖືວ່າຜູ້ຖືຮຸ້ນດັ່ງກ່າວເຫັນດີກັບມະຕິທີ່ໄດ້ສະເໜີໃນກອງປະຊຸມ.
- ສຳລັບຜູ້ຖືຫຸ້ນມອບສິດ ໃຫ້ເປັນຕົວແທນເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ຖືຮຸ້ນຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງດັ່ງທີ່ຜູ້ຖືຫຸ້ນລະບຸໄວ້ໃນໃບມອບສິດ ໄປບັນທຶກຄະນແນນໄວ້ລ່ວງໜ້າເປັນທີ່ຮຽບຮ້ອຍແລ້ວ. ເພື່ອອຳນວຍຄວາມສະດວກໃຫ້ຜູ້ຕາງໜ້າ ດັ່ງກ່າວບໍ່ຈຳເປັນຕ້ອງລົງຄະແນນສຽງອີກເທື່ອໜຶ່ງໃນກອງປະຊຸມ.

2. ການນັບຄະແນນສຽງ

- ການນັບຄະແນນສຽງຈາກແຕ່ລະວາລະຈະຖືກປະຕິບັດໂດຍອີງໃສ່ຄວາມບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະຜູ້ຕາງໜ້າ ທີ່ເຂົ້າຮ່ວມກອງປະຊຸມ ໂດຍບໍລິສັດ ໄດ້ບັນທຶກລ່ວງໜ້າແລ້ວ ໂດຍການຫັກອອກຈາກຫຸ້ນທັງໝົດ ຂອງຜູ້ຖືຫຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ສຳລັບແຕ່ລະວາລະ.
- ຈະປະກາດຜົນການລົງຄະແນນສຽງຈາກແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ພາຍຫຼັງທີ່ ການລົງຄະແນນສຽງແຕ່ລະຄັ້ງໄດ້ສິ້ນສຸດລົງ. ໃນກໍລະນີ ຜູ້ຖືຮຸ້ນໄດ້ລົງຄະແນນສຽງບໍ່ເຫັນດີ ພາຍຫຼັງທີ່ປະກາດຄະແນນສຽງໃຫ້ກອງປະຊຸມເມື່ອວາລະປະຊຸມສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ ນັບເອົາຄະແນນສຽງດັ່ງກ່າວ.

ພິທີກອນສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໂດຍລາຍງານແຕ່ລະວາລະ ດັ່ງຕໍ່ໄປນີ້:

ວາລະ 1: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2022 ເຊິ່ງໄດ້ຜ່ານການກວດສອບ

ສະພາບໍລິຫານ ໄດ້ ພິຈາລະນາແລ້ວ ແລະ ເຫັນດີສະເໜີ ໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງ ບົດລາຍງານ ຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2022 ເຊິ່ງໄດ້ຜ່ານການກວດສອບ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງ ປະຊຸມ.

ຫຼັງຈາກສະເໜີໂດຍຫຍໍ້ແລ້ວ ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງ ຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດ ລາຍງານການເງິນປີ 2022 ເຊິ່ງໄດ້ຜ່ານການກວດສອບ

ວາລະ 2: ພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ ປີ 2021.

ພິທີກອນເປັນຜູ້ນຳສະເໜີອະລະຕໍ່ກອງປະຊຸມດັ່ງຕໍ່ໄປນີ້:

ອີງຕາມກອງປະຊຸມສະພາບໍລິຫານຄັ້ງອັນທີ່ 15 ສິງຫາ 2022 ແລະ ກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ຊຶ່ງ ອະນຸມັດຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະ ຜ່ານມາ ຮອດທ້າຍ ປີ2021 ຈຳນວນ 570,027,606,419 ກີບ. ຈາກການປະຕິບັດຕົວຈິງ, ສະພາບໍລິຫານ ຕົກລົງເຫັນດີ ສະເໜີ ຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອອະນຸມັດຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ ປີ 2021 ຈຳນວນ 17,185,500,000ກີບ, ເງິນປັນຜົນຕໍ່ຮຸ້ນ 57 ກີບ, ໃນວັນທີ30 ມິຖຸນາ ປີ 2023. ສ່ວນທີ່ເຫຼືອແມ່ນຈະ ນຳໃຊ້ເປັນທຶນຂະຫຍາຍທຸລະກິດ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງ ປະຊຸມ.

ພິທີກອນໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳ ຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ໃນໄລຍະຜ່ານມາ ຮອດທ້າຍ ປີ2021 ຈຳນວນ 17,185,500,000ກີບ, ເງິນປັນຜົນຕໍ່ຮຸ້ນ 57 ກີບ, ໃນວັນທີ30 ມິຖຸນາ ປີ 2023.

ວາລະ 3: ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ

ແຜນທຸລະກິດຂອງບໍລິສັດ ສຳລັບປີ 2022ໄດ້ສົ່ງໃຫ້ຜູ້ຖືຮຸ້ນ ພ້ອມກັບ ຈົດໝາຍເຊີນ ຂອງກອງປະຊຸມຄັ້ງນີ້.

ພິທີກອນ ກ່າວຄຳເຫັນຂອງສະພາບໍລິຫານ ຊຶ່ງໄດ້ພິຈາລະນາເຫັນດີ ແລະ ໃຫ້ສະເໜີຕໍ່ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດການບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ

ວາລະ 4: ພິຈາລະນາ ແລະ ຮັບຮອງແຜນທຸລະກິດຂອງ ລອຊ ສຳລັບປີ 2023

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຜນທຸລະກິດຂອງ ລອຊ ສຳລັບປີ 2023 ຊຶ່ງລາຍລະອຽດແມ່ນໄດ້ສົ່ງພ້ອມກັບໜັງສືເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດແຜນທຸລະກິດຂອງ ລອຊ ສຳລັບປີ 2023

ວາລະ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງທ່ານ Yoshihito Oshima **ເປັນສະມາຊິກສະພາບໍລິຫານ, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຕົວແທນທາງດ້ານກົດໝາຍ (ອອກຊື່ໃນໃບທະບຽນວິສາຫະກິດ) ແລະ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ ແລະ ຮັກສາການຮອງຜູ້ອຳນວຍການຝ່າຍການເງິນແທນທ່ານ** Takuro Nishida

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງທ່ານ Yoshihito Oshima ເປັນສະມາຊິກສະພາບໍລິຫານ, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຕົວແທນທາງດ້ານກົດໝາຍ (ອອກຊື່ໃນໃບທະບຽນວິສາຫະກິດ) ແລະ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ ແລະ **ຮັກສາການຮອງຜູ້ອຳນວຍການຝ່າຍການເງິນແທນທ່ານ** Takuro Nishida

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການແຕ່ງຕັ້ງ ທ່ານ Yoshihito Oshima **ເປັນສະມາຊິກສະພາບໍລິຫານ, ເປັນ ປະທານເຈົ້າໜ້າທີ່ບໍລິຫານ, ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຕົວແທນທາງດ້ານກົດໝາຍ (ອອກຊື່ໃນໃບທະບຽນວິສາຫະກິດ) ແລະ ເປັນຜູ້ອຳນວຍການໃຫຍ່ຂອງບໍລິສັດ ແລະ ຮັກສາການຮອງຜູ້ອຳນວຍການຝ່າຍການເງິນແທນທ່ານ** Takuro Nishida

ວາລະ 6: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງທ່ານ ຫວຽດ ວົງຖາວອນ ເປັນຮອງຜູ້ອຳນວຍການຝ່າຍດຳເນີນງານແທນທ່ານ Morikawa Kazutaka **ແລະ ເປັນ ສະມາຊິກ ສະພາບໍລິຫານຄົນໃໝ່.**

ສະພາບໍລິຫານ ໄດ້ ພິຈາລະນາ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງທ່ານ ຫວຽດ ວົງຖາວອນ ເປັນຮອງຜູ້ອຳນວຍການຝ່າຍດຳເນີນງານແທນ ທ່ານ **Morikawa Kazutaka** ແລະ ເປັນ ສະມາຊິກ ສະພາບໍລິຫານຄົນໃໝ່

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

LAO ASEAN LEASING PUBLIC COMPANY

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງ ຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການແຕ່ງຕັ້ງການແຕ່ງຕັ້ງທ່ານ ຫວຽດ ວົງຖາວອນ ເປັນຮອງຜູ້ອຳນວຍການຝ່າຍດຳເນີນງານແທນ ທ່ານ Morikawa Kazutaka **ແລະ ເປັນ ສະມາຊິກ ສະພາບໍລິຫານຄົນໃໝ່.**

ວາລະ 7: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບປະຈຳປີ 2023 ແລະ ກຳນົດຄ່າບໍລິການກວດສອບ

ສະພາບໍລິຫານ ໄດ້ ພິຈາລະນາ ບໍລິສັດ **Ernst & Young Lao Co. Ltd** ແມ່ນໄດ້ເປັນຜູ້ກວດສອບ ບັນຊີ ພາຍນອກຂອງ ບໍລິສັດ ມາໄດ້ຫຼາຍປີ, ເປັນຜູ້ກວດສອບທີ່ມີປະສົບການ ແລະ ເຂົ້າໃຈກ່ຽວກັບການກັບລະບົບ ການເຄື່ອນໄຫວຂອງບໍລິສັດດີ. ດັ່ງນັ້ນ, ສະພາບໍລິຫານຈຶ່ງມີຄວາມເຊື່ອໝັ້ນ ແລະ ເຫັນດີ ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ບໍລິສັດ **Ernst & Young Lao Co. Ltd** ເປັນຜູ້ກວດສອບ ໃນປີ 2023, ສຳ ລັບຄ່າບໍລິການກວດສອບແມ່ນມອບໃຫ້ສະພາບໍລິຫານຄົ້ນຄ້ວາພິຈາລະນາ ແລະ ອະນຸມັດຕາມຄວາມເໝາະສົມ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງ ປະຊຸມ.

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງ ຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ບໍລິສັດ **Ernst & Young Lao Co. Ltd** ແມ່ນໄດ້ເປັນຜູ້ ກວດສອບ ບັນຊີ ພາຍນອກຂອງ ບໍລິສັດ ປະຈຳປີ 2023.

ວາລະ 8: ພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ

ອີງຕາມແຜນຂະຫຍາຍທຸລະກິດ ປີ 2023 ແລະ ເພື່ອຕອບສະໜອງການບໍລິການສິນເຊື່ອໃຫ້ທົ່ວເຖິງ, ສະພາບໍລິຫານ ໄດ້ພິຈາລານະ ແລະ ເຫັນດີສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງເອົາ ແລະ ອະນຸມັດການກູ້ຢືມເງິນຈາກ

LALCO
LAO ASEAN LEASING PUBLIC COMPANY

ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ ໂດຍ ມອບໃຫ້ ສະພາບໍລິຫານ ຫຼື ຜູ້ທີ່ໄດ້ຮັບແຕ່ງຕັ້ງຈາກສະພາບໍລິຫານເປັນຜູ້ມີອຳນາດໃນການ ພິຈາລະນາ ແລະ ດຳເນີນວຽກງານການກູ້ຢືມນີ້ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງ ປະຊຸມ.

ກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງ ຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.600 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.
ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດ ການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ/ອື່ນໆ ຈຳນວນ 10,000,000,000-30,000,000,000 ກີບ ແລະ 5,000,000-10,000,000ໂດລາ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງ ປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມ ໃນເວລາ 11:50 ຕອນເຊົ້າ.

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ທ່ານ Yoshihito Oshima